ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 30 /ຈທວ.ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 04 ກຸມພາ 2015

ເຖິງ: ເຈົ້າຂອງວິສາຫະກິດທີ່ກ່ຽວຂ້ອງ, ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ

ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ (ບໍລິສັດ ໂກນຊິຕິ ອິນເຕີເນັດ ຈຳກັດ)

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສື ສະເໜີຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ເລກທີ 2168/ອຄ.ນວ, ລົງວັນທີ 03 ທັນວາ 2014;
- ອີງຕາມ ບົດບັນທຶກກອງປະຊຸມ ຂອງກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ເລກທີ 342/ປກສ ນວ, ລົງວັນທີ 13 ພະຈິກ 2014;
- ອີງຕາມ ແຈ້ງການ ເລື່ອງການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພນ, ລົງວັນທີ 09 ກັນຍາ 2011;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ (ບໍລິສັດ ໂກນຊິຕິ ອິນເຕີເນັດ ຈຳກັດ) ເລກທີ 280/ຈທວ.ທຄວ.ອຄ, ລົງວັນທີ 11 ທັນວາ 2014.

ບົນພື້ນຖານ ໜັງສືສະບັບເລກທີ 2168/ອຄ.ນວ, ລົງວັນທີ 03 ທັນວາ 2014 ແລະ ບົດບັນທຶກກອງປະຊຸມ ຂອງກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ເລກທີ 342/ປກສ ນວ, ລົງວັນທີ 13 ພະຈິກ 2014; ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ບໍລິສັດ ໂກນຊິຕິ ອິນເຕີເນັດ ຈຳກັດ, ທະບຽນວິສາຫະກິດ ເລກທີ 274/ຈທວ, ລົງວັນທີ 18 ກໍລະກົດ 2014, ມີທີ່ຕັ້ງສຳນັກງານຕັ້ງຢູ່, ບ້ານ ໜອງດ້ວງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຖາວອນໃນທຸກປະເພດທຸລະກິດ ຕາມທີ່ໄດ້ບົ່ງໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ;

2. ການໂຈະການເຄື່ອນໄຫວທຸລະກິດຖາວອນນີ້ ແມ່ນມີຜົນປະຕິບັດນັບແຕ່ວັນທີ 05 ກຸມພາ 2015 ເປັນຕົ້ນໄປ;

3. ການໂຈະການເຄື່ອນໄຫວທຸລະກິດຖາວອນ ມີຜົນຕໍ່ວິສາຫະກິດດັ່ງກ່າວ ດັ່ງນີ້:
   3.1 ຕ້ອງດຳເນີນການຍຸບເລີກ ຕາມຂັ້ນຕອນ ແລະ ກຳນົດເວລາທີ່ບົ່ງໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ 2013);
   3.2 ບໍ່ສາມາດເຄື່ອນໄຫວທຸລະກິດໄດ້, ໃນກໍລະນີລະເມີດຈະຖືກປະຕິບັດມາດຕະການຢ່າງເຂັ້ມງວດ ຕາມມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ 2013);

3.3 ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ເກັບຮັກສາໄວ້. ກໍລະນີ ບຸກຄົນ ຫຼື ນິຕິບຸກຄົນໃດ ຫາກນຳໃບທະບຽນວິສາຫະກິດຂອງວິສາຫະກິດດັ່ງກ່າວໄປນຳໃຊ້ ນອກຈາກຈະຖືກປະຕິບັດມາດຕະການ ຕາມຂໍ້ 3.2 ຖັດເທິງນີ້ແລ້ວ ຍັງຕ້ອງຮັບຜິດຊອບທັງໝົດຕໍ່ໜ້າກົດໝາຍ ຈາກຜົນເສຍຫາຍທີ່ຕົນໄດ້ສ້າງຂຶ້ນ.

ແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ກະຊວງອຸດສາຫະກຳ ແລະ ການຄ້າ / ເຈົ້າໜ້າທີ່ ທະບຽນວິສາຫະກິດ / ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ພວົງ ລີທອນເວົງ

ບ່ອນສົ່ງ

- ຫ້ອງວ່າການສືກທະບານ 1 ສະບັບ;
- ກົມສວບສາອາກອນ 1 ສະບັບ;
- ປສກ ນະຄອນຫຼວງວຽງຈັນ 1 ສະບັບ;
- ບໍລິສັດ ໄກນອີດີ ອິນເຕີເນັດ ຈຳກັດ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳ 1 ສະບັບ;
- ຫ້ອງວ່າການນະຄອນຫຼວງ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 1 ສະບັບ;
- ສຳເນົາ 1 ສະບັບ.